# San Diego Unified School District

EUGENE BRUCKER EDUCATION CENTER (619) 725-5506
4100 Normal Street, San Diego, CA 92103-2682

**Carl A. Cohn**
Superintendent of Schools

ເດືອນກັນຍາ, **2007**

ເຖິງພໍ່ແມ່/ຜູ້ປົກຄອງນັກຮຽນທີ່ນັບຖື:

ຍິນດີຕ້ອນຮັບເຂົ້າຮຽນສົກຮຽນປີ **2007 – 08**, ຂອບໃຈ ມາຍັງຄອບຄົວໃຫມ່ ແລະ ຄອບຄົວທີ່ກັບມາເຂົ້າອີກ, ທີ່ອະນຸຍາດໃຫ້ບໍຣິການຊ່ວຍເຫລືອເດັກຂອງທ່ານ.

ການເລີ້ມເຂົ້າໂຮງຮຽນໃຫມ່ປີນີ້ເປັນໂອກາດທີ່ພວກເຮົາຈະໄດ້ຕັດສິນໃຈອີກ ເພື່ອປະຕິບັດຫນ້າທີ່ຂອງພວກເຮົາ ເພື່ອ:

- ເລັ່ງລັດເອົາຜົນປະໂຍດໃນການຮ່ຳຮຽນຂອງນັກຮຽນ
- ໃຫ້ໂຮງຮຽນມີຄວາມປອດພັຍ, ຮັກສາໃຫ້ຄົງເດີມ ແລະ ເປັນລະບຽບຮຽບຮ້ອຍ
- ຜູກພັນແນ້ນແຫນ້ນກັບພໍ່ແມ່ນັກຮຽນ, ຊຸມຊົນ, ທຸຣະກິດ ແລະ ການສຶກສາຂັ້ນສູງ
- ເພີ້ມຂຍາຍທັມມະຈະຣິຍາຂອງພະນັກງານ ແລະ
- ຮັບປະກັນໃຫ້ມີທຶນພຽງພໍສຳຫລັບໂຮງຮຽນຂອງພວກເຮົາ.

ຂ້າພະເຈົ້າຍິນດີທີ່ຈະລາຍງານວ່າ ພວກເຮົາກຳລັງສ້າງຄວາມກ້າວຫນ້າໃນການບັນລຸເຖິງເປົ້າເຫລົ່ານີ້. ນັກຮຽນສູນກາງສຶກສາແຊນດີເອໂກໄດ້ສ້າງຄວາມກ້າວຫນ້າຂຶ້ນ ກວາເກືອບໝົດທຸກສູນກາງສຶກສາຂອງເມືອງໃຫຍ່ໆ ໃນຣັຖຄາລີຟໍເນັຍ. ພວກເຮົາມຸ້ງຫນ້າໄປສູ່ທິດທາງອັນຖືກຕ້ອງແລ້ວ ແຕ່ວາ ຕ້ອງໄດ້ເຮັດວຽກຫລາຍຂຶ້ນເພື່ອເລັ່ງລັດເອົາຜົນປະໂຍດເຫລົ່ານີ້ ແລະ ປິດຊອງຫວາງຄວາມກ້າວຫນ້າທີ່ຫລຸດລົ່ນກັນໃຫ້ນ້ອຍລົງ. ເພື່ອໃຫ້ໄດ້ແນວນີ້, ໃນລະດູໃບໄມ້ລົ່ນປີນີ້ ແຜນການສອນ ແລະ ຫລັກສູດການຮຽນໃຫມ່ກໍຈະໄດ້ນຳມາໃຊ້. ແຜນການສອນໄດ້ຈັດຈໍ່ໃສ່ຄວາມຄາດຫມາຍຂັ້ນສູງທັງຫມົດ, ການສິດສອນ – ທີ່ແນໃສ່ຂັ້ນມາຕຖານການຮຽນເກັ່ງ, ວິທີການຊ່ອຍນັກຮຽນ *ທຸກໆ ຄົນ* ໃຫ້ມີຄວາມສຳເຣັດ, ການໃຊ້ຂໍ້ມູນທີ່ຖືກຕ້ອງໄດ້ຜົນ, ແລະ ມີການຝຶກອົບຮົມສຳຫລັບຄຣູ ແລະ ຫົວຫນ້າຫມວດໂຮງຮຽນຂອງພວກເຮົາຕໍ່ເນື່ອງໄປ.

ພວກເຮົາໄດ້ສືບຕໍ່ຮັບຟັງພໍ່ແມ່ ໃນສິ່ງທີ່ເຂົາເຈົ້າຢາກໄດ້ ແລະ ຕ້ອງການ. ການສຳຣວດຄວາມພໍໃຈຂອງພໍ່ແມ່ໄດ້ແຈກຢາຍອອກແລ້ວໃນເດືອນມິຖຸນາ ເພື່ອຊອກຂໍ້ມູນຕົວຢ່າງ ໃນຄອບຄົວສູນກາງສຶກສາ. ຂໍຂອບໃຈທຸກຄອບຄົວທີ່ໄດ້ສະລະເວລາຂຽນປະກອບ ແລະ ສົ່ງໃບສຳຣວດກັບຄືນມາ. ພວກເຮົາກຳລັງສຶກສາຜົນການສຳຣວດນີ້ຢູ່, ແຕ່ກໍມີຄວາມດີໃຈຫລາຍທີ່ເຫັນວາພໍ່ແມ່ຫລາຍກວາ **90** ເປີເຊັນ ບັນລະຍາຍວາໂຮງຮຽນຂອງເຂົາເຈົ້າມີຄວາມປອດພັຍ ຫລື ປອດພັຍຫລາຍທີ່ສຸດ, ແລະ ບອກວາເຂົາເຈົ້າຮູ້ສຶກໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ແລະ ເຄົາຣົບນັບຖືຈາກໂຮງຮຽນ.

ໂຮງຮຽນສິລປະໃຫມ່ຂອງຣັຖໄດ້ເປີດໃຫ້ນັກຮຽນຄັ້ງທຳອິດໃນວັນທີ **4** ກັນຍາ. ພວກເຮົາໄດ້ແກ້ໄຂການງົບປະມານປະຈຳປີໃຫ້ກ້ຳເກັ່ງ ແລະ ຄົງຕົວ, ເຖິງວາການຄິດໄລ່ຂອງຣັຖຫລຸດລົງ ແລະ ການຈົດຊື່ເຂົ້າໂຮງຮຽນຫລຸດນ້ອຍລົງ. ໃນການສຳຣວດຄວາມພໍໃຈຂອງພະນັກງານມໍ່ໆມານີ້, ພະນັກງານສວນຫລາຍໄດ້ລາຍງານວາ ເຂົາເຈົ້າມີທັມມະຈະຣິຍາຂັ້ນດີ ຫລື ຂັ້ນດີເລີດ.

ຂະນະທີ່ຍັງມີການຊຸກຍູ້ໃຫ້ສິ່ງເຫລົ່ານີ້ມີຄວາມສຳເຣັດດີຂຶ້ນນີ້, ວຽກງານຂອງພວກເຮົາຍັງບໍ່ສຳເຣັດເທື່ອ, ດ້ວຍການສືບຕໍ່ຊ່ວຍເຫລືອ ແລະ ຮວມພົວພັນຂອງທ່ານນີ້, ພວກເຮົາຈະສ້າງຄວາມສຳເຣັດຕາມຄວາມຕັ້ງໃຈທີ່ພວກເຮົາຢາກໃຫ້ສູນກາງສຶກສາດີເລີດຂອງອະເມຣິກາ.

ຂໍຂອບໃຈທີ່ອະນຸຍາດໃຫ້ພວກຂ້າພະເຈົ້າບໍຣິການຮັບໃຊ້ທ່ານ. ຂໍໃຫ້ມີສົກຮຽນທີ່ດີເລີດ!

ດ້ວຍຄວາມນັບຖືຢ່າງສູງ,

**Carl A. Cohn**
**Superintendent of Schools**